

# ຈົດໝາຍຂ່າວ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ

## ສະບັບທີ 3

## ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ (LIWG)

ປະຈຳໄຕມາດ ເດືອນມັງກອນ - ມີນາ 2018 | ວັນທີ 27 ເມສາ 2018

ສະບາຍດີບັນດາທ່ານ ຈົດໝາຍຂ່າວສະບັບນີ້ ແມ່ນ ສະບັບທີ 3 ຂອງ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ (LIWG). ຈົດໝາຍຂ່າວຂອງພວກເຮົາແມ່ນມີຈຸດປະສົງເພື່ອນຳສະເໜີ ກ່ຽວກັບບັນດາກິດຈະກຳຕ່າງໆທີ່ໄດ້ຈັດຕັ້ງປະຕິບັດໂດຍ ກອງເລຂາ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ, ເຄືອຂ່າຍ, ຄູ່ຮ່ວມງານ ແລະ ໂຄງການລິເລີ່ມ ກ່ຽວກັບວຽກງານດ້ານທີ່ດິນ, ການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ການສົ່ງເສີມການເຄົາລົບສິດທິຂອງຊຸມຊົນ ຕໍ່ກັບການຄອບຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ.

ຄຳຄິດເຫັນ ແລະ ຄຳແນະນຳຂອງທ່ານຕໍ່ກັບຈົດໝາຍຂ່າວຂອງພວກເຮົາ ແມ່ນຈະເປັນປະໂຫຍດຢ່າງຍິ່ງເພື່ອເປັນການປັບປຸງເນື້ອຫາໃຫ້ມີຄວາມນ່າສົນໃຈ ແລະ ສອດຄ້ອງຫຼາຍຂຶ້ນໃນສະບັບຕໍ່ໆໄປ.

## *ເລື່ອງເດັ່ນປະຈຳໄຕມາດ..*




## ກອງປະຊຸມໃຫຍ່ຂອງ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ ປະຈຳປີ 2018

ກອງເລຂາ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ ໄດ້ຈັດກອງປະຊຸມໃຫຍ່ປະຈຳປີຂຶ້ນທຸກໆປີ ເພື່ອເປັນການ ລາຍງານກ່ຽວກັບຜົນງານຂອງກອງເລຂາ, ກິດຈະກຳ ແລະ ຄວາມສຳເລັດທີ່ເກີດຂຶ້ນໃນປີທີ່ຜ່ານມາ ພ້ອມກັບນຳສະເໜີແຜນງານໃນປີຕໍ່ໆໄປ.

ສຳລັບປີ2018, ກອງເລຂາ LIWG ໄດ້ນຳສະເໜີກ່ຽວກັບຜົນງານໃນປີຜ່ານມາ ເຊິ່ງລວມມີ: ກິດຈະກຳຕ່າງໆ ແລະ ຜົນສຳເລັດອັນສຳຄັນ ຂອງວຽກງານທາງດ້ານທີ່ດິນ ພ້ອມດ້ວຍ ແຜນວຽກໃນປີ 2018....

*ອ່ານລາຍລະອຽດໜ້າ2...*



**ພາກເນື້ອໃນ:**


- ການຈັດກອງປະຊຸມ ແລະ ການຝຶກອົບຮົມໂດຍ LIWG……………………………2
- ກຸ່ມເຮັດວຽກສະເພາະໜ່ວຍງານວິຊາການ………………………………………...3
- ກິດຈະກຳຂອງສະມາຊິກ, ໂຄງການລິເລີ່ມ ແລະ ຄູ່ຮ່ວມງານ LIWG………………..3
- ຂ່າວເດັ່ນໃນໄຕມາດກ່ຽວກັບທີ່ດິນໃນລາວ……………………………………….5
- ການສື່ສານຂໍ້ມູນຂ່າວສານຂອງ LIWG ແລະ ເວັບໄຊ້ແຫ່ງຂໍ້ມູນ…………………….5
- ກິດຈະກຳໄຕມາດໜ້າ (ເມສາ – ມິຖຸນາ 2018) ……………………………….6

# ການຈັດກອງປະຊຸມ ແລະ ການຝຶກອົບຮົມ ໂດຍກອງເລຂາ LIWG

## ກອງປະຊຸມແລກປ່ຽນບົດຮຽນ ລະຫວ່າງອົງການຈັດຕັ້ງທາງສັງຄົມລາວ ແລະ ອົງການຈັດຕັ້ງສາກົນທີ່ເຮັດວຽກກ່ຽວກັບເລື່ອງທີ່ດິນ




ບົດນຳສະເໜີກ່ຽວກັບແຜນແມ່ບົດການຈັດສັນທີ່ດິນໂດຍ ກຊສ ໃນລະຫວ່າງກອງປະຊຸມແລກປ່ຽນ

ໃນວັນທີ 22 ມັງກອນ 2018 ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ (LIWG) ໄດ້ຈັດກອງປະຊຸມ **"ແລກປ່ຽນບົດຮຽນ ລະຫວ່າງ ອົງການຈັດຕັ້ງທາງສັງຄົມລາວ ລວມທັງພະນັກງານລາວຈາກອົງການຈັດຕັ້ງສາກົນທີ່ເຮັດວຽກກ່ຽວກັບເລື່ອງທີ່ດິນ ".** ໃນກອງປະຊຸມນີ້ ກອງເລຂາກໍ່ໄດ້ເຊີນຄູ່ຮ່ວມງານພາກລັດຈາກ ສະພາແຫ່ງຊາດ ແລະ ກະຊວງຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ ເຂົ້າຮ່ວມກອງປະຊຸມດ້ວຍ. ການພົບປະແລກປ່ຽນຄັ້ງນີ້ ບັນດາຜູ້ເຂົ້າຮ່ວມຈາກ ອົງການຈັດຕັ້ງທາງສັງຄົມ ແລະ ສາກົນ ທີ່ເປັນສະມາຊິກຂອງ LIWG, ຄູ່ຮ່ວມງານຈາກພາກລັດ ຈາກກົມທີ່ດິນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຮອງປະທານກຳມະທິການກົດໝາຍ ແຫ່ງສະພາແຫ່ງຊາດລາວ ໄດ້ມີການໂອ້ລົມ-ສົນທະນາແລກປ່ຽນກັນຫຼາຍຫົວຂໍ້ທີ່ຕິດພັນກັບວຽກງານທີ່ດິນ, ປ່າໄມ້ ແລະ ຊັບພະຍາກອນທຳມະຊາດເຊັ່ນ: ວຽກງານດ້ານກົດໝາຍທີ່ດິນ, ແຜນແມ່ບົດແຫ່ງຊາດກ່ຽວກັບການຄຸ້ມຄອງທີ່ດິນ ແລະ ຄວາມຄືບໜ້າຂອງການປັບປຸງກົດໝາຍທີ່ດິນ, ຂະບວນການຮັບຮອງເອົາກົດໝາຍທີ່ດິນຈາກສະພາແຫ່ງຊາດ, ສູນຮຽນຮູ້ຂໍ້ມູນກ່ຽວກັບທີ່ດິນ, ການນຳໃຊ້ ແລະ ການຄຸ້ມຄອງຊີວະນາໆພັນຂອງຊຸມຊົນ, ຄວາມສຳຄັນຂອງປະຕິທິນກົດໝາຍ ແລະ ໂຄງການປື້ມຄູ່ມືປະຕິທິນກົດໝາຍ, ແລະ ການແລກປ່ຽນບົດຮຽນກ່ຽວກັບການເຮັດວຽກກັບຊຸມຊົນ ໂດຍສະເພາະກ່ຽວກັບແມ່ຍິງ ແລະ ເດັກນ້ອຍ ແລະ ປະເດັນກ່ຽວກັບການປູກກ້ວຍ.

ທ່ານສາມາດຮຽນຮູ້ເພີ່ມເຕີມກ່ຽວກັບກອງປະຊຸມນີ້ເພີ່ມເຕີມໄດ້ທີ່: *https://youtu.be/BE8t_uSkc0U*

## ກອງປະຊຸມໃຫຍ່ LIWG ປະຈຳປີ 2018 (AGM)

ກອງເລຂາ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ ໄດ້ຈັດກອງປະຊຸມໃຫຍ່ປະຈຳປີຂຶ້ນທຸກໆປີ ເພື່ອເປັນການລາຍງານກ່ຽວກັບຜົນການເຮັດວຽກຂອງກອງເລຂາ, ກິດຈະກຳ ແລະ ຄວາມສຳເລັດທີ່ເກີດຂື້ນໃນປີທີ່ຜ່ານມາ ພ້ອມກັບນຳສະເໜີແຜນງານໃນປີຕໍ່ໆໄປ.

ສຳລັບປີ2018, ກອງປະຊຸມໃຫຍ່ໄດ້ຈັດຂຶ້ນ ໃນວັນທີ 2 ກຸມພາ 2018 ແລະ ມີບັນດາສະມາຊິກຫຼັກຂອງ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນເຂົ້າຮ່ວມ. ພາຍໃນກອງປະຊຸມຄັ້ງນີ້ ທາງກອງເລຂາໄດ້ນຳສະເໜີກ່ຽວກັບຜົນງານໃນປີຜ່ານມາ ເຊິ່ງລວມມີ: ຜົນການປະຕິບັດບັນດາກິດຈະກຳຕ່າງໆ, ການເງິນ, ຜົນສຳເລັດອັນສຳຄັນ, ວຽກງານທາງດ້ານທີ່ດິນ ໂດຍສະເພາະຄວາມຄືບໜ້າ ການປັບປຸງກົດໝາຍທີ່ດິນ ແລະ ຄວາມສຳພັນການເຮັດວຽກຮ່ວມກັນຂອງກອງເລຂາ ແລະ ພາກລັດເຊັ່ນ: ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ແລະ ສະພາແຫ່ງຊາດລາວ ແລະ ພ້ອມທັງນຳສະເໜີແຜນງານຂອງປີຕໍ່ໄປ.

ນອກນັ້ນ ທາງກອງເລຂາກໍ່ໄດ້ເຊີນທີມງານຈາກສູນຮຽນຮູ້ຂໍ້ມູນກ່ຽວກັບທີ່ດິນ (LILC) ນຳສະເໜີກ່ຽວກັບສູນ ແກ່ສະມາຊິກທີ່ໄດ້ເຂົ້າຮ່ວມກອງປະຊຸມ.



ບັນດາສະມາຊິກ LIWG ທີ່ເຂົ້າຮ່ວມກອງປະຊຸມ

ກອງປະຊຸມນີ້ ຍັງເປັນເວທີສົນທະນາຮ່ວມກັນລະຫວ່າງກອງເລຂາ ແລະ ບັນດາສະມາຊິກຫຼັກຂອງກຸ່ມ ໃນການສືບຕໍ່ເຮັດໃຫ້ກຸ່ມໃຫ້ມີຄວາມເຂັ້ມແຂງຂຶ້ນ ກ່ຽວກັບວຽກງານດ້ານທີ່ດິນ ແລະ ເພື່ອເປັນການຊອກຫາແນວທາງໃນການຮັກສາກຸ່ມໃຫ້ມີຄວາມຍືນຍົງ ເພື່ອວ່າເຄືອຂ່າຍນີ້ສາມາດດຳເນີນງານຕາມຈຸດປະສົງຂອງບັນດາສະມາຊິກເຊັ່ນ: ການແລກປ່ຽນຂໍ້ມູນ, ການອຳນວຍຄວາມສະດວກໃນການຈັດງານແລກປ່ຽນປະສົບການ ແລະ ບົດຮຽນ ແລະ ອື່ນໆ.

## ງານພົບປະແລກປ່ຽນ “ ຜົນການສຶກສາຂອງນັກສຶກສາຮອງກົງໃນລາວ:ຍຸດທະສາດການວາງແຜນພູມສັນຖານ ”




ແຜນທີ່ກ່ຽວກັບການນຳໃຊ້ທີ່ດິນລະອຽດໃນ ແຂວງຫລວງນ້ຳທາ

ໃນວັນທີ 9 ມີນາ 2018 ກອງເລຂາ ໄດ້ເຊີນ ອາຈານ ແລະ ນັກສຶກສາຈາກ ຄະນະ ສະຖາປັດຕະຍາກຳສາດ ຈາກມະຫາໄລ ຮ່ອງກົງ ເພື່ອ ນຳສະເໜີ-ແລກປ່ຽນຄຳຄິດເຫັນ ກ່ຽວກັບ “**ຜົນການສຶກສາຂອງນັກສຶກສາຮ່ອງກົງກ່ຽວກັບປະເດັນທີ່ດິນ ແລະ ການລົງທຶນຂອງຈີນໃນລາວ**”. ໃນງານດັ່ງກ່າວທາງອາຈານ ໄດ້ມີນຳສະເໜີ ຕົວຢ່າງ ແນວທາງໃນການອອກແບບພູມີສັນຖານທັດສະນີຍະພາບ ໃນປະເທດໄທ ແລະ ມຽນມາ. ນອກນັ້ນ ຕົວແທນນັກສຶກສາ ໄດ້ນຳສະເໜີ ຜົນການສຶກສາຂອງຕົນຕໍ່ກັບ ສະມາຊິກຂອງກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນທີ່ໄດ້ເຂົ້າຮ່ວມງານດັ່ງກ່າວ ກ່ຽວກັບແຜນການນຳໃຊ້ທີ່ດິນ, ການພັດທະນາດ້ານອຸດສາຫະກຳ ແລະ ການກະສິກຳ ຕາມແລວເສັ້ນທາງລົດໄຟລາວ-ຈີນ ເຊິ່ງກວມເອົາບັນດາຫົວຂໍ້ຕ່າງໆເຊັ່ນ: ແນວຄິດການເມືອງກ່ຽວການວາງແຜນທີ່ດິນຢູ່ແຂວງຫລວງນ້ຳທາ, ການຢຸດຕິການປູກຝິ່ນໃນເມືອງສິງ ແຂວງຫລວງນ້ຳທາ, ການພັດທະນາເສັ້ນທາງເລກທີ 3 ແລະ ປ່າສະຫງວນນ້ຳທາ, ການພັດທະນາເຂື່ອນໄຟຟ້າໃນອ່າງນ້ຳງື່ມ, ການຂຸດຄົ້ນບໍ່ແຮ່ ຢູ່ເຂດພູເບັຍ, ປ່າຜະລິດຢູ່ແຂວງວຽງຈັນ ແລະ ການຄ້າໄມ້ ຂອງປະເທດລາວ.

ທ່ານສາມາດຮຽຣຮູ້ເພີ່ມເຕີມກ່ຽວກັບຂອບວຽກງານຂອງຄະນະດັ່ງກ່າວໄດ້ທີ່: http://www.designforconservation.org/

# ກຸ່ມເຮັດວຽກສະເພາະ/ໜ່ວຍງານວິຊາການ

## ກຸ່ມທີ່ປຶກສາ ກ່ຽວກັບການປັບປຸງກົດໝາຍທີ່ດິນ

ກຸ່ມທີ່ປຶກສາ ສະເພາະກົດໝາຍທີ່ດິນ ມີການພົບປະກັນເປັນປະຈໍາ ເພື່ອແຈ້ງຄວາມຄືບໜ້າ ແລະ ປຶກສາຫາລືກ່ຽວກັບຂະບວນການປັບປຸງກົດໝາຍທີ່ດິນ. ຢູ່ໃນຊ່ວງໄຕມາດນີ້, ສະມາຊິກຂອງກຸ່ມໄດ້ພົບປະກັນສອງຄັ້ງ ເພື່ອປຶກສາຫາລືກ່ຽວກັບແຜນຍຸດທະສາດ ກ່ຽວກັບການເຮັດວຽກຂອງກຸ່ມ ຕໍ່ກັບກົດໝາຍທີ່ດິນສະບັບປັບປຸງ.

ທາງກຸ່ມ ຍັງຈະໄດ້ນໍາສະເໜີກ່ຽວກັບ **ຂໍ້ສະເໜີແນະນໍາຫຼັກກ່ຽວກັບປະເດັນທີ່ດິນໃນ ສປປ ລາວ** ໃນກອງປະຊຸມ **"ຄູ່ຮ່ວມພັດທະນາ"** ທີ່ຈະໄດ້ຈັດຂຶ້ນໂດຍ ກອງເລຂາ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ ໃນເດືອນ ເມສາ 2018.

***ຂໍ້ມູນສໍາຄັນ:*** ຈາກຂໍ້ມູນທີ່ໄດ້ແຈ້ງມາ ຮ່າງກົດໝາຍທີ່ດິນສະບັບປັບປຸງ ແມ່ນຈະຖືກນໍາສະເໜີຜ່ານໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ VIII ເພື່ອພິຈາລະນາ ແລະ ຮັບຮອງເອົາກົດໝາຍປັບປຸງສະບັບສະບັບນີ້ ແລະ ກອງປະຊຸມດັ່ງກ່າວແມ່ນຈະໄດ້ຖືກຈັດຂຶ້ນ ທ້າຍປີ 2018.

**ຂໍ້ສະເໜີແນະນໍາຫຼັກ ສໍາລັບປະເດັນທີ່ດິນ ໃນ ສປປ ລາວ**

ຂໍ້ສະເໜີແນະນໍາຫຼັກ ສໍາລັບປະເດັນທີ່ດິນໃນ ສປປ ລາວ ສະບັບນີ້ ສ້າງຂຶ້ນໂດຍຜ່ານການວິເຄາະຢ່າງເລິກເຊິ່ງ, ມີການປຶກສາຫາລືກັບພາກສ່ວນກ່ຽວຂ້ອງ ແລະ ມີການຄົ້ນຄວ້າຕາມພາກປະຕິບັດທີ່ດີເລີດຂອງສາກົນ, ໂດຍມີເປົ້າໝາຍ ຍົກສູງການຊົມໃຊ້ທີ່ດິນເພື່ອຄວາມກ້າວໜ້າທາງດ້ານເສດຖະກິດ, ສັງຄົມ, ວັດທະນາທໍາ ແລະ ຈິດໃຈ ຂອງປະຊາຊົນລາວ.

ຂໍ້ສະເໜີແນະນໍາຫຼັກ ສະບັບນີ້ ປະກອບ **ມີ 4 ຫົວຂໍ້** ຄື: ການຮັບຮູ້ ການຄອບຄອງນໍາໃຊ້ທີ່ດິນຕາມປະເພນີ, ການໂອນຄືນສິດໃນການນໍາໃຊ້ທີ່ດິນຄືນ ເພື່ອຈຸດປະສົງສາທາລະນະປະໂຫຍດ, ການໃຫ້ເຊົ່າ ແລະ ສໍາປະທານທີ່ດິນ, ແລະ ການຮັບປະກັນຄວາມສະເໝີພາບລະ ຫວ່າງ ຍິງ-ຊາຍ ຕໍ່ກັບສິດໃນການຄອບຄອງນໍາໃຊ້ທີ່ດິນ. ຂໍ້ສະເໜີດັ່ງກ່າວ ແມ່ນອີງໃສ່ມາດຕະຖານສາກົນເປັນ ຕົ້ນກໍ່ແມ່ນຫຼັກການຂອງ **ບົດແນະນໍາ ຕາມຄວາມສະໝັກໃຈ ກ່ຽວກັບການຄຸ້ມຄອງບໍລິຫານການຄອບຄອງນໍາໃຊ້ ຢ່າງມີຄວາມຮັບຜິດຊອບ ໃນເລື່ອງທີ່ດິນ, ພື້ນທີ່ປະມົງ ແລະ ປ່າໄມ້ ຂອງອົງການອາຫານ ແລະ ການກະເສດແຫ່ງສະຫະປະຊາຊາດ** (FAO) ເຊິ່ງບົດແນະ ນໍາດັ່ງກ່າວ ແມ່ນມາດຕະຖານສາກົນອັນໜຶ່ງທີ່ສົ່ງເສີມ ສິດຄອບຄອງນໍາໃຊ້ທີ່ໝັ້ນຄົງ ແລະ ການເຂົ້າເຖິງຊັບ ພະຍາກອນທໍາມະຊາດຢ່າງເປັນທໍາ ເຊິ່ງແມ່ນປັດໃຈອັນໜຶ່ງ ໃນການລົບລ້າງຄວາມອຶດຫິວ ແລະ ຄວາມທຸກຍາກ.

ບົດແນະນໍາດັ່ງກ່າວ ແມ່ນຖືກຮັບຮອງໂດຍ ຄະນະຄວາມໝັ້ນຄົງດ້ານສະບຽງອາຫານຂອງໂລກ (CFS) ໃນປີ 2012 ໂດຍ 125 ປະເທດສະມາຊິກ, ຊຶ່ງລວມທັງ ສປປ ລາວ. ຕໍ່ມາ ບົດແນະນໍາ ແມ່ນໄດ້ຖືກຮັບຮອງຕື່ມອີກໂດຍບັນດາອົງການ ຊຶ່ງ ລວມມີ ຈີ8, ຈີ20, ຣິໂອ+20 ແລະ ສະພາສູງຂອງສະຫະປະຊາຊາດ. ນອກຈາກນີ້ ຍັງໄດ້ມີການອ້າງອີງນິຕິກໍາຂອງປະເທດຕ່າງໆເພື່ອເປັນຕົວຢ່າງ.

# ກິດຈະກໍາຂອງສະມາຊິກ/ໂຄງການລິເລີ່ມ/ຄູ່ຮ່ວມງານ ແລະ ເຄືອຂ່າຍຂອງ LIWG

## ໂຄງການ LIFE

ໂຄງການສົ່ງເສີມການຮຽນຮູ້ກ່ຽວກັບທີ່ດິນ ເພື່ອເພີ່ມຄວາມໝັ້ນຄົງທາງດ້ານສະບຽງອາຫານ (LIFE-ໂຄງການໜຶ່ງພາຍໃຕ້ LIWG) ໄດ້ຈັດງານຝຶກອົບຮົມແບບໃກ້ຊິດ ສອງຄັ້ງໃນໄຕມາດນີ້ ຄື: ການຝຶກອົບຮົມແກ່ອົງການຈັດຕັ້ງທີ່ບໍ່ຫວັງຜົນກໍາໄລລາວ ແລະ ໃຫ້ແກ່ກະຊວງຍຸດຕິທໍາ.

**ໃນລະຫວ່າງວັນທີ 22-26 ມັງກອນ 2018,** ທີມງານ LIFE ໄດ້ມີການຈັດຝຶກອົບຮົມແບບໃກ້ຊິດໃຫ້ແກ່ກະຊວງຍຸດຕິທໍາ ຢູ່ ເມືອງປາກຊ່ອງ, ແຂວງຈໍາປາສັກ ເຊິ່ງມີບັນດາຂະແໜງການຕ່າງໆທີ່ກ່ຽວຂ້ອງໃນຂັ້ນແຂວງ ແລະ ຂັ້ນເມືອງ ເຂົ້າຮ່ວມ ພາຍໃຕ້ຫົວຂໍ້ **"ການສົ່ງເສີມໃຫ້ປະຊາຊົນເຂົ້າສູ່ຂະບວນການຍຸຕິທໍາ".** ນີ້ຖືວ່າເປັນຄັ້ງທໍາອິດຂອງ ໂຄງການ LIFE ໃນການຝຶກອົບຮົມແກ່ ກະຊວງຍຸດຕິທໍາ. ການຝຶກອົບຮົມຄັ້ງນີ້ ທີມງານ LIFE ໄດ້ມີການນໍາໃຊ້ເຄື່ອງມືຝຶກອົບຮົມ ທີ່ມີຄວາມຫຼາກຫຼາຍ ເຊິ່ງເຮັດໃຫ້ບັນຍາກາດການຝຶກອົບຮົມ ມີຄວາມຫຼູ້ຽນໄຫຼ ແລະ ມີການແລກປ່ຽນເຊິ່ງກັນ ແລະ ກັນລະຫວ່າງຜູ້ເຂົ້າຮ່ວມ ແລະ ຄູຝຶກຢ່າງຟົດຟື້ນ ໂດຍສະເພາະ ການນໍາໃຊ້ເຄື່ອງມືໃນການວິເຄາະບັນຫາ ແລະ ເຊື່ອມໂຍງໃສ່ກັບກົດໝາຍທີ່ກ່ຽວຂ້ອງ. ນອກຈາກນັ້ນບັນດາຜູ້ເຂົ້າຮ່ວມ ຍັງໄດ້ມີໂອກາດໃນການຝຶກຫັດສະການເປັນຄູຝຶກ ເຊິ່ງຖືວ່າເປັນຄັ້ງທໍາອິດສໍາລັບຜູ້ເຂົ້າຮ່ວມໃນການຝຶກຫັດສະດັ່ງກ່າວຕາມວິທີການຂອງທີມງານຄູຝຶກ LIFE .



ບັນດາຜູ້ເຂົ້າຮ່ວມຝຶກອົບຮົມ ຮ່ວມກັນເຮັດກິດຈະກໍາ ໃຍແມງມຸມ




ຜູ້ເຂົ້າຮ່ວມຝຶກອົບຮົມນໍາສະເໜີຄືນກ່ຽວກັບເກມທີ່ໄດ້ນໍາໃຊ້ ເຂົ້າໃນການຝຶກອົບຮົມ

**ໃນລະຫວ່າງວັນທີ 21 – 23 ກຸມພາ 2018** ທີມງານຂອງ LIFE ໄດ້ມີການຈັດຝຶກອົບຮົມໃຫ້ແກ່ບັນອົງການຈັດຕັ້ງທີ່ບໍ່ຫວັງຜົນກໍາໄລລາວ ເຊິ່ງກໍ່ແມ່ນບັນສະມາຊິກຂອງ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ ທີ່ໄດ້ເຂົ້າຮ່ວມການຝຶກອົບຮົມດັ່ງກ່າວ ໂດຍມີຈຸດປະສົງເພື່ອ ແນະນໍາການນໍາໃຊ້ເຄື່ອງມືຝຶກອົບຮົມກ່ຽວກັບທີ່ດິນທີ່ຜະລິດຂຶ້ນໂດຍທີມງານຂອງ ໂຄງການ LIFE.

ຈາກການຝຶກອົບຮົມ, ບັນດາຜູ້ເຂົ້າຮ່ວມຕ່າງກໍ່ໃຫ້ຄໍາເຫັນວ່າ ການຝຶກອົບຮົມໃນລັກສະນະດັ່ງກ່າວແມ່ນຖືວ່າເປັນຄັ້ງທໍາອິດສໍາລັບພວກເຂົາ ແລະ ທາງຄູຝຶກເອງກໍ່ມີການນໍາໃຊ້ເຄື່ອງມືໃໝ່ໆ, ການນໍາໃຊ້ເກມແບບມີສ່ວນຮ່ວມ ແຊກເຂົ້າບົດຮຽນ ເຊິ່ງສາມາດອະທິບາຍກ່ຽວກັບຫົວຂໍ້ໃນບົດຮຽນຂອງການຝຶກອົບຮົມໄດ້ຢ່າງມີປະສິດທິຜົນ. ຜູ້ເຂົ້າຮ່ວມຍັງສະເໜີວ່າ ການຝຶກອົບຮົມຄັ້ງນີ້ບໍ່ພຽງແຕ່ໄດ້ຮັບທັດສະອັນໃໝ່ໆເທົ່ານັ້ນ ແຕ່ການຝຶກອົບຮົມຄັ້ງນີ້ຍັງຊ່ວຍໃຫ້ເຂົາເຈົ້າເຂົ້າໃຈການເຮັດວຽກກ່ຽວກັບປະເດັນທີ່ດິນແບບເປັນທີມຮ່ວມກັນ ແລະ ຝຶກການຮັບຟັງແນວຄວາມຄິດຫຼາກຫຼາຍທີ່ຕ່າງກັນ.

***ແຈ້ງຂໍ້ມູນສໍາຄັນ:***ໃນຊ່ວງໄຕມາດນີ້ມີການປ່ຽນແປງໃຫຍ່ສໍາລັບໂຄງການນີ້ຄື 1) ທຶນຂອງໂຄງການ LIFE ໃນຊ່ວງຜ່ານມານັ້ນ ແມ່ນສິ້ນສຸດໃນ ເດືອນມີນາ ປີ 2018. ເຖິງຢ່າງໃດກໍ່ດີ, ທາງໂຄງການໄດຮັບການແຈ້ງຂ່າວດີທີ່ໄດ້ຮັບທຶນເພີ່ມອີກ 6 ເດືອນ ຈາກເດືອນເມສາ ຫາ ເດືອນຕຸລາ ປີ 2018 ຈາກ MRLG; 2) ເນື່ອງຈາກຜູ້ບໍລິຫານໂຄງການ LIFE ໄດ້ມີການລາອອກຈາກຕໍາແໜ່ງດັ່ງກ່າວ, ສະນັ້ນທາງໂຄງການແມ່ນຢູ່ໃນຂະບວນການຊອກຫາ ຜູ້ບໍລິຫານໂຄງການ LIFE ຄົນໃໝ່ ເພື່ອມາສານງານຂອງໂຄງການຕໍ່ໄປ.

## ສູນຂ່າວສານເພື່ອການຮຽນຮູ້ ແລະ ແລກປ່ຽນກ່ຽວກັບທີ່ດິນ (LILC)

ສູນຂ່າວສານເພື່ອການຮຽນຮູ້ ແລະ ແລກປ່ຽນກ່ຽວກັບທີ່ດິນ (LILC) ເປັນໂຄງການໃໝ່ທີ່ດໍາເນີນກິດຈະກໍາຮ່ວມກັນລະຫວ່າງ ອົງການບ້ານຈຸດສຸມສາກົນ (VFI) ແລະ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ (LIWG) ເຊິ່ງ ສູນ LILC ແມ່ນມີທີ່ຕັ້ງທີ່ຫ້ອງການ VFI.

ພາຍໃນໄຕມາດ ປະຈໍາເດືອນ ມັງກອນ - ມີນາ ປີ 2018, ທາງທີມງານຂອງ LILC ໄດ້ມີການຈັດຫຼາຍກິດຈະກໍາຂຶ້ນພາຍໃນສູນ ແລະ ນອກສະຖານທີ່ ພ້ອມທັງມີການລົງພື້ນຖານເພື່ອນໍາສະເໜີສູນ ແກ່ບັນດາວິທະຍາໄລ ແລະ ມະຫາວິທະຍາໄລແຫ່ງຊາດ. ໃນງານຕ່າງໆທີ່ໄດ້ຈັດຂຶ້ນນັ້ນ ມີທັງຄູ່ຮ່ວມງານຂອງ VFI ແລະ ບັນດາສະມາຊິກຂອງ LIWG ເຂົ້າຮ່ວມ.

- ໃນເດືອນມັງກອນ ທາງ LILC ໄດ້ເຊີນທີມງານຈາກໂຄງການ LIFE ໃນການນໍາສະເໜີ ເຄື່ອງມືຝຶກອົບຮົມກ່ຽວກັບທີ່ດິນ. ບັນດາຜູ້ເຂົ້າຮ່ວມ ແມ່ນປະກອບດ້ວຍສະມາຊິກຈາກ LIWG ແລະ ຄູ່ຮ່ວມງານຂອງ VFI ເພື່ອຮຽນຮູ້ກ່ຽວກັບເຄື່ອງມືດັ່ງກ່າວ ເຊິ່ງເປັນເຄື່ອງມືອັນໃໝ່ ທີ່ທາງຜູ້ເຂົ້າຮ່ວມສາມາດນໍາເອົາໄປໃຊ້ກັບວຽກຂອງຕົນໃນຂັ້ນຮາກຖານໄດ້.

- ໃນ ເດືອນກຸມພາ ທາງ LILC ໄດ້ເຊີນ ກຸ່ມອາສາສະໝັກ ຊຸມຊົນສີຂຽວ ແລະ ຊາວບ້ານຈາກເມືອງງອຍ, ແຂວງຫຼວງພະບາງ ເພື່ອມາແລກປ່ຽນປະສົບການການເຮັດວຽກຂອງກຸ່ມອາສາສະໝັກ ກັບຊຸມຊົນ ແລະ ວິຖີຊີວິດຂອງຊຸມຊົນລຽບຕາມແມ່ນໍ້າອູ່. ງານດັ່ງກ່າວ ແມ່ນຖືກຈັດຂຶ້ນໃນຮູບແບບ **"ງານວາງສະແດງຮູບພາບ"** ໂດຍໃຫ້ ຊາວບ້ານເປັນຜູ້ເລົ່າເລື່ອງຮູບພາບດັ່ງກ່າວທີ່ກ່ຽວກັບວິຖີຊີວິດຂອງຊຸມຊົນໃນລ້ອງແມ່ນໍ້າອູ່.
- ໃນ ເດືອນມີນາ ທາງ LILC ໄດ້ມີການລົງພື້ນທີ່ເຜີຍແຜ່ຂໍ້ມູນກ່ຽວກັບສູນໃຫ້ກັບບັນດາຄະນະຕ່າງໆຂອງມະຫາວິທະຍາໄລຢູ່ນະຄອນຫລວງວຽງຈັນ. ໃນໄຕມາດນີ້ ທາງທີມງານ LILC ໄດ້ລົງໄປເຜີຍແຜ່ຂໍ້ມູນຂອງສູນ ແກ່ ຄະນະນິຕິສາດ ແລະ ລັດຖະສາດ, ແລະ ວິທະຍາໄລ ຊັບພະວິຊາ ເຊິ່ງມີບັນດານັກສຶກສາ ແລະ ຄູອາຈານເຂົ້າຮ່ວມ.



ຕົວແທນຊາວບ້ານນໍາສະເໜີກ່ຽວກັບຄວາມສໍາພັນຂອງແມ່ນໍ້າອູ່ຕໍ່ວິຖີຊີວິດຂອງເຂົາເຈົ້າ



ທີມງານ LILC ລົງເຜີຍແຜ່ຂໍ້ມູນກ່ຽວກັບສູນໃຫ້ແກ່ບັນດານັກສຶກສາ

***ແຈ້ງຂໍ້ມູນ:*** ຢູ່ໃນ ຈົດໝາຍຂ່າວສະບັບກ່ອນ ລະບຸຊື່ຂອງສູນ ວ່າ *ສູນຂໍ້ມູນກ່ຽວກັບທີ່ດິນໃນລາວ (LLRC)* ເນື່ອງຈາກວ່າໃນໄລຍະດັ່ງກ່າວ ຊື່ຂອງສູນຍັງບໍ່ທັນໄດ້ຄັດເລືອກຢ່າງເປັນທາງການ ຈຶ່ງໄດ້ໃຊ້ຊື່ດັ່ງກ່າວໄປກ່ອນ. ເຊິ່ງປັດຈຸບັນຊື່ຂອງສູນແມ່ນມີການຄັດເລືອກເປັນທີ່ຮຽບຮ້ອຍແລ້ວ ແລະ ມີຊື່ເອີ້ນເປັນທາງການວ່າ **ສູນຂ່າວສານເພື່ອການຮຽນຮູ້ ແລະ ແລກປ່ຽນກ່ຽວກັບທີ່ດິນ (LILC).**

## ກິດຈະກໍາຕ່າງໆທີ່ ກອງເລຂາ LIWG ເຂົ້າຮ່ວມ

- ### ງານສໍາມະນາແລກປ່ຽນບົດຮຽນກ່ຽວກັບ ການຮັບປະກັນສິດຄອບຄອງທີ່ດິນ ດ້ວຍໃບຢັ້ງຢືນປ່າໄມ້

ໃນວັນທີ 6 ກຸມພາ 2018, ກອງເລຂາ LIWG ໄດ້ເຂົ້າຮ່ວມງານສໍາມະນາແລກປ່ຽນບົດຮຽນກ່ຽວກັບ "**ການຮັບປະກັນສິດຄອບຄອງທີ່ດິນ ດ້ວຍໃບຢັ້ງ ຢືນປ່າໄມ້**" ເຊິ່ງຈັດຂຶ້ນໂດຍ MRLG. ເຊິ່ງງານດັ່ງກ່າວ ແມ່ນມີການນໍາສະເໜີຫົວຂໍ້ຕ່າງໆທີ່ກ່ຽວຂ້ອງເຊັ່ນ: 1)ບົດນໍາສະເໜີແຜນງານຂອງໃບຢັ້ງຢືນ, 2)ໃບ ຢັ້ງຢືນປ່າໄມ້ສາມາດຮັບຮອງສິດຄອບຄອງທີ່ດິນ ຂອງຊາວກະສິກໍາຂະໜາດນ້ອຍໄດ້ຄືແນວໃດ?, 3)ອຸດສະຫະກໍາຢາງພາລາຫວຽດນາມ: ສະຖານະການປັດຈຸບັນ ແລະ ຄວາມຄາດຫວັງໃນການພັດທະນາທີ່ຢັ້ງຢືນ, 4)ແຜນງານຄຸ້ມຄອງໄມ້ສັກແຂວງຫຼວງພະບາງ ແລະ ປະສົບການກ່ຽວກັບໃບຢັ້ງຢືນການຄຸ້ມຄອງປ່າໄມ້ (ກໍລະນີສຶກສາ), 5)ການພົວພັນກັນລະຫວ່າງ FLEGT, ການຢັ້ງ ຢືນການຄຸ້ມຄອງປ່າໄມ້ ແລະ ພາກປະຊາສັງຄົມ.




ໃນງານດັ່ງກ່າວ ບັນດາຜູ້ເຂົ້າຮ່ວມໄດ້ຮ່ວມສົນທະນາກ່ຽວກັບປະເດັນທີ່ວ່າ "ແທ້ຈິງແລ້ວໃບຢັ້ງຢືນການຄຸ້ມຄອງປ່າໄມ້ນັ້ນ ສາມາດຮັບຮອງສິດຄອບຄອງທີ່ດິນຂອງຊາວກະສິກອນຂະໜາດນ້ອຍໄດ້ແທ້ຫຼືບໍ? ເຊິ່ງຄໍາຖາມນີ້ ເປັນຄໍາຖາມທີ່ຍັງບໍ່ທັນມີຄໍາຕອບຊັດເຈນເທື່ອ. ດັ່ງນັ້ນມັນຈຶ່ງມີຄວາມສໍາຄັນ ໃນການປຶກສາຫາລືເພື່ອເປັນການຢັ້ງຢືນຢ່າງຊັດເຈນ ວ່າໃບຢັ້ງຢືນປ່າໄມ້ນັ້ນສາມາດເປັນອີກທາງໜຶ່ງໃນການຮັບປະກັນສິດການຄອບຄອງທີ່ດິນໄດ້ແທ້ຫລືບໍ ໂດຍສະເພາະຕໍ່ກັບຊາວກະສິກອນຂະໜາດນ້ອຍ.

ທ່ານສາມາດເບິ່ງລາຍລະອຽດຂອງບັນດາບົດນໍາສະເໜີພາຍໃນງານສໍາມະນານີ້ໄດ້ທີ່: study session on forest certification and land tenure

- ### ງານສໍາມະນາແລກປ່ຽນ ສໍາລັບນັກສຶກສາ ຈາກພາກວິຊາ ສຸຂະພາບສາທາລະນະ, ມະຫາວິທະຍາໄລສຸຂະພາບຂອນແກ່ນ, ປະເທດໄທ



ສວນຜັກຂອງປະຊາຊົນກ່ອນມີການພັດທະນາເຂດດອນຈັນ

ໃນວັນທີ 14 ເດືອນມີນາ 2018 ຫ້ອງການ Helvetas ໄດ້ຈັດງານ "**ງານສໍາມະນາແລກປ່ຽນ ສໍາລັບນັກສຶກສາຈາກພາກວິຊາສຸຂະພາບສາທາລະນະ, ມະຫາວິທະຍາໄລສຸຂະພາບຂອນແກ່ນ, ປະເທດໄທ**" ເຊິ່ງງານສໍາມະນາຄັ້ງນີ້ ປະກອບມີຫຼາຍຫົວຂໍ້ທີ່ກ່ຽວຂ້ອງກັບສຸຂະພາບ ເຊັ່ນ ປະເດັນທີ່ດິນແລະຄວາມໝັ້ນຄົງທາງດ້ານສະບຽງອາຫານ,ໂພສະນາການ ແລະ ຜົນກະທົບຈາກການນໍາໃຊ້ສານເຄມີ.

ງານສໍາມະນານີ້ ໄດ້ມີການແລກປ່ຽນປະເດັນທີ່ກ່ຽວຂ້ອງກັບປັດໄຈທີ່ມີຜົນກະທົບຕໍ່ກັບສຸຂະພາບຂອງປະຊາຊົນ ໂດຍສະເພາະຊາວກະສິກອນຢູ່ເຂດຊົນນະບົດ ເຊັ່ນ: 1) ປະສົບການວຽກງານການປັບປຸງດ້ານໂພສະນາການ ຢູ່ເຂດເນີນສູງ ແລະ ການກວດສອບກ່ຽວກັບໂພສະນາການ; ແລະ 2) ການນໍາໃຊ້ສານເຄມີໃນພື້ນທີ່ຕ່າງໆ ແລະ ຜົນກະທົບຕໍ່ສຸຂະພາບ ຕໍ່ກັບການນໍາໃຊ້ສານເຄມີໃນຂະແໜງກະສິກໍາ.

ພ້ອມນັ້ນ Helvetas ຍັງໄດ້ ເຊີນກອງເລຂາ LIWG ເພື່ອແລກປ່ຽນກ່ຽວກັບປະເດັນທີ່ດິນ ແລະ ການຄໍ້າປະກັນສະບຽງອາຫານ ໃນສະຖານະການທີ່ມີການປ່ຽນແປງດ້ານການພັດທະນາຢ່າງໄວວາໃນປະເທດລາວ ແລະ ຜົນກະທົບຂອງມັນຕໍ່ກັບ ວິຖີຊີວິດຂອງ ກຸ່ມຊົນເຜົ່າ, ປະຊາຊົນຜູ້ທຸກຍາກ ແລະ ແມ່ຍິງ.

- **ກອງປະຊຸມຄັ້ງທີ3 ກ່ຽວກັບການ ທົບທວນຜົນງານການຮ່ວມມືກັນລະຫວ່າງລັດຖະບານລາວ ແລະ ອົງການຈັດຕັ້ງສາກົນ**



ການວາງສະແດງຜົນງານຂອງໂຄງການ ທີ່ຈັດໂດຍ ເຄືອຂ່າຍ INGO ລາວໃນກອງປະຊຸມ

ເພື່ອເປັນສ່ວນໜຶ່ງຂອງກອງປຊຸມ ທາງກະຊວງຕ່າງປະເທດລາວ ໄດ້ເຊີນເຄືອຂ່າຍອົງການຈັດຕັ້ງສາກົນຢູ່ໃນລາວ ຈັດງານວາງສະແດງຜົນງານຂອງສະມາຊິກເຄືອຂ່າຍ ທີ່ຈັດຂຶ້ນ ວັນທີ 28 ກຸມພາ ປີ 2018 ຢູ່ຫໍປະຊຸມແຫ່ງຊາດ.

ໃນງານວາງສະແດງປະກອບມີ 5 ຂະແໜງການເຊັ່ນ: ຂະແໜງການ ສຸຂະພາບ ແລະ ໂພສະນາການ, ການສຶກສາ, ການກະສິກໍາ, ລູກລະເບີດທີ່ບໍ່ທັນແຕກ ແລະ ດິນພິການ ເຊິ່ງຂະແໜງການຕ່າງໆດັ່ງກ່າວ ແມ່ນມີບັນດາອົງການຈັດຕັ້ງສາກົນທີ່ເປັນສະມາຊິກຂອງເຄືອຂ່າຍເຂົ້າຮ່ວມໃນການວາງສະແດງຜົນງານຂອງໂຄງການຕົນໃນຂະແໜງການທີ່ກ່ຽວຂ້ອງ.

ໃນສ່ວນຂອງກອງເລຂາ LIWG ກໍ່ໄດ້ເຂົ້າຮ່ວມງານວາງສະແດງດັ່ງກ່າວໃນຂະແໜງການກະສິກໍາ ພ້ອມທັງນໍາເອົາຜົນງານຕ່າງໆຂອງບາງສະມາຊິກ ມາວາງສະແດງພ້ອມກັນ.

ກອງປະຊຸມນີ້ ໄດ້ມີບັນດາອົງການຈັດຕັ້ງສາກົນຢູ່ໃນລາວ ແລະ ກະຊວງການຕ່າງປະເທດເຂົ້າຮ່ວມ ເພື່ອທົບທວນກ່ຽວກັບຜົນງານການເຮັດວຽກຮ່ວມກັນຕັ້ງແຕ່ປີ 2015, ຜົນສໍາເລັດ, ສິ່ງທ້າທາຍທີ່ໄດ້ເກີດຂຶ້ນໃນຊ່ວງທີ່ຜ່ານມາ ແລະ ໂອກາດໃນການເຮັດວຽກຮ່ວມກັນຂອງອົງການຈັດຕັ້ງສາກົນ ແລະ ລັດຖະບານລາວໃນອະນາຄົດ.

ໃນ ກອງປະຊຸມ ດັ່ງກ່າວ ທ່ານ ສະເຫລີມໄຊ ກົມມະສິດ, ລັດຖະມົນຕີ ກະຊວງການຕ່າງປະເທດ ໄດ້ກ່າວວ່າ *"ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງທາງສັງຄົມ ແມ່ນໄດ້ປະກອບສ່ວນຢ່າງສໍາຄັນຕໍ່ກັບການພັດທະນາປະເທດຊາດ ແລະ ການເຮັດວຽກຮ່ວມກັນລະຫວ່າງລັດຖະບານ ແລະ ອົງການຈັດຕັ້ງດັ່ງກ່າວ ແມ່ນເພື່ອນໍາໄປສູ່ການຫຼຸດພົ້ນຈາກຄວາມທຸກຍາກ ແລະ ເພື່ອ ເປັນການພັດທະນາປະເທດຊາດ ໃຫ້ສາມາດບັນລຸເປົ້າໝາຍການພັດທະນາທີ່ຍືນຍົງ (SDG)."*

## ຂ່າວເດັ່ນໃນໄຕມາດກ່ຽວກັບປະເດັນທີ່ດິນໃນລາວ




ກອງເລຂາ LIWG ໄດ້ມີການແຈ້ງຂ່າວສານຕ່າງໆກ່ຽວກັບປະເດັນທີ່ດິນ ແລະ ຊັບພະຍາກອນທໍາມະຊາດ ຢ່າງເປັນປົກກະຕິແກ່ບັນດາສະມາຊິກ ໂດຍ ກຸ່ມອີເມວ ແລະ ທາງເວັບໄຊ້. ສໍາລັບການນໍາສະເໜີຂ່າວເດັ່ນ ທາງກອງເລຂາໄດ້ມີການສະຫຼູບຂ່າວປະຈໍາອາທິດ ແລະ ແຈ້ງຂ່າວປະຈໍາທຸກໆອາທິດ ທັງຂ່າວ ພາສາອັງກິດ ແລະ ພາສາລາວ.

ທ່ານສາມາດຕິດຕາມຂ່າວເດັ່ນປະຈໍາອາທິດໄດ້ທີ່ນີ້: http:www.laolandinfo.org/blog/monthly-news-summary/

## ວຽກງານການສື່ສານຂອງ LIWG ; ແລະ ແຫ່ງຂໍ້ມູນຂ່າວສານ ກ່ຽວກັບທີ່ດິນ ແລະ ຊັບພະຍາກອນທໍາມະຊາດ

### ວຽກງານດ້ານສື່ສານຂອງ LIWG

ຊ່ອງທາງການສື່ສານ (ອອນລາຍ)




**ອີເມວກຸ່ມ LIWG:**

ອີເມລກຸ່ມຂອງ LIWG ແມ່ນເປັນຊ່ອງທາງການສື່ສານຂໍ້ມູນ ທາງໜຶ່ງຂອງ LIWG ແລະ ການສື່ສານຂໍ້ມູນກັບບັນດາສະມາຊິກພາຍໃນກຸ່ມ.




**ເວັບໄຊ້ LIWG:**

ເວັບໄຊ້ຂອງ LIWG ແມ່ນມີການນໍາສະເໜີຂ່າວ ແລະ ຂໍ້ມູນກ່ຽວກັບທີ່ດິນຢ່າງເປັນປະຈໍາ ໂດຍສະເພາະ ແມ່ນບັນດາເອກະສານ, ສິ່ພິມ ທີ່ກ່ຽວກັບປະເດັນທີ່ດິນໃນລາວ. ໃນນັ້ນ ສິ່ພິມ ແມ່ນປະກອບມີ ບົດວິໃຈຕ່າງໆ ໂດຍ LIWG, ສະມາຊິກ, ຄູ່ຮ່ວມງານ ແລະ ຂອງເຄືອຂ່າຍ.

ໃນສ່ວນຂອງຕົວເລກຜູ້ເຂົ້າເບິ່ງເວັບໄຊ້ປະຈໍາໄຕມາດນີ້ ແມ່ນມີຈໍານວນເພີ່ມຂຶ້ນ. ເຊິ່ງມາເຖິງເດືອນມີນາ 2018 ລວມມີຜູ້ເຂົ້າຊົມເວັບໄຊ້ພວກເຮົາທັງໝົດເຖິງ **13,473 ຜູ້ເຂົ້າຊົມ.**

ທ່ານສາມາດເຂົ້າຢ້ຽມຊົມເວັບໄຊ້ຂອງພວກເຮົາໄດ້ທີ່ນີ້: : **www.laolandinfo.org**




**ເຟສບຸກ LIWG:**

ເຟສບຸກຂອງ LIWG ແມ່ນເປັນສື່ອອນລາຍໜຶ່ງທີ່ທາງກອງເລຂາ ໄດ້ມີການແຈ້ງຂ່າວສ່ານຕ່າງໆທີ່ກ່ຽວກັບທີ່ດິນ ແລະ ນໍາສະເໜີກ່ຽວກັບການເຄື່ອນໄຫວກິດຈະກໍາຕ່າງໆຂອງບັນດາສະມາຊິກ ແລະ ທາງກອງເລຂາ. ເຊິ່ງມາເຖິງ ເດືອນມີນາ ປີ 2018, ຈໍານວນຜູ້ເຂົ້າມາໄລກ໌ ໜ້າເພສຂອງ LIWG ມີເຖິງ **4,538 ໄລກ໌** ແລະ ມີ ຈໍານວນ **4,553 ຄົນ** ທີ່ຕິດຕາມ ເພສ ຂອງພວກເຮົາ.

ທ່ານສາມາດຕິດຕາມເຟສບຸກຂອງພວກເຮົາໄດ້ທີ່ນີ້: **https://www.facebook.com/laolandinfo/**

## ແນະນໍາບາງແຫຼ່ງຂໍ້ມູນ ແລະ ເວັບໄຊ້ ກ່ຽວກັບທີ່ດິນ ແລະ ຊັບພະຍາກອນທໍາມະຊາດ

ໃນປັດຈຸບັນໄດ້ມີເວັບໄຊ້ຫຼາຍໆເວັບໄຊ້ທີ່ ພວກເຮົາສາມາດຊອກຫາຂໍ້ມູນກ່ຽວກັບປະເດັນທີ່ດິນຊັບພະຍາກອນທໍາມະຊາດ ແລະ ທາງສັງຄົມ. ໃນໄຕມາດນີ້ ພວກເຮົາຈະແນະນໍາທ່ານບາງເວັບໄຊ້ກ່ຽວກັບປະເດັນດັ່ງກ່າວ ເຊິ່ງມີລາຍລະອຽດຂ້າງລຸ່ມນີ້:

- **LaoFAB** ແມ່ນພື້ນທີ່ການສົນທະນາອອນລາຍ ແລະ ແລກປ່ຽນຂໍ້ມູນຂ່າວສານກ່ຽວກັບ ເລື່ອງລາວຂອງຊາວກະສິກອນ ແລະ ທຸລະກິດກະສິກໍາໃນປະເທດລາວ ເຊິ່ງມີການສົນທະນາເປັນພາສາອັງກິດ. ທ່ານສາມາດເຂົ້າເບິ່ງຂໍ້ມູນໄດ້ດ້ວຍການສະໝັກເປັນສະມາຊິກທີ່: http://www.laofab.org/
- **LaoLink** ແມ່ນພື້ນທີ່ສົນທະນາອອນລາຍກ່ຽວກັບ ການກະສິກໍາໃນປະເທດລາວ ແລະ ເປັນການສົນທະນາເປັນພາສາລາວ. ທ່ານສາມາດເຂົ້າຮ່ວມການສົນທະນານີ້ໄດ້ດ້ວຍການສະໝັກເປັນສະມະຊິກໄດ້ທີ່: http://www.laolink.org/laolink.htm
- **ໂຄງການຕາບີ** ແມ່ນມີໃນການປະກອບສ່ວນວຽກງານໃນການຫຼຸດຜ່ອນຄວາມທຸກຍາກ ແລະ ປັບປຸງວິຖີຊີວິດຂອງປະຊາຊົນໃນທ້ອງຖິ່ນດ້ວຍວິທີການມີສ່ວນຮ່ວມຂອງຫຼາຍພາກສ່ວນ&ວິທີການແບບຍືນຍົງກ່ຽວກັບການນໍາໃຊ້ຊີວະນາໆພັນໃນລາວ. ທ່ານສາມາດຊອກຂໍ້ມູນເພີ່ມເຕີມໄດ້ທີ່ນີ້: http://www.tabi.la/
- **Open Development Mekong (ODM)** ແມ່ນເວັບໄຊຖານຂໍ້ມູນເປີດ ເຊິ່ງເປັນຖານຂໍ້ມູນໜຶ່ງ ທີ່ສະໜອງຂໍ້ມູນ ແບບປະຕູດຽວກ່ຽວກັບຂໍ້ມູນດ້ານການພັດທະນາໃນລະດັບປະເທດ ແລະ ພາກພື້ນ ສໍາລັບປະຊາສັງຄົມ, ເອກະຊົນ ແລະ ພາກລັດ. ທ່ານສາມາດເຂົ້າເບິ່ງລາຍລະອຽດໄດ້ທີ່: https://opendevelopmentmekong.net/ ແລະ ໃນເວັບໄຊ້ນີ້ ທ່ານຍັງສາມາດເຂົ້າເບິ່ງສະເພາະຂໍ້ມູນປະເທດລາວໄດ້ໃນ Open development Laos ທີ່: https://laos.opendevelopmentmekong.net/
- **Mekong Land Research Forum (MLRF)** ແມ່ນເວທີສົນທະນາແລກປ່ຽນກ່ຽວກັບງານວິໄຈກ່ຽວກັບ ການຄຸ້ມຄອງທີ່ດິນຢູ່ພາກພື້ນແມ່ນໍ້າຂອງ. ທ່ານສາມາດເບິ່ງລາຍລະອຽດໄດ້ທີ່: http://rcsd.soc.cmu.ac.th/mlrf/
- **Mekong Land Information Knowledge and Engagement Platform (MLIKE)** ແມ່ນເປັນພື້ນທີ່ອອນລາຍທີ່ລວບລວມ ແລະ ການສົນທະນາກ່ຽວກັບຂໍ້ມູນກ່ຽວກັບປະເດັນທີ່ດິນ ໃນລະດັບພາກພື້ນແມ່ນໍ້າຂອງ ແລະ ເປັນຊ່ອງທາງທີ່ຈະເຊື່ອມໂຍງທຸກຄົນເພື່ອການຮຽນຮູ້ແລະເຮັດວຽກຮ່ວມກັນກ່ຽວກັບປະເດັນດັ່ງກ່າວ. ເບິ່ງຂໍ້ມູນເພີ່ມເຕີມທີ່: https://mlike.org/
- **The Land Portal** ແມ່ນມີຈຸດປະສົງໃນການສ້າງພື້ນທີ່ໃນການໂອ້ລົມ ແລະ ແລກປ່ຽນຂໍ້ມູນກ່ຽວກັບປະເດັນທີ່ດິນ ເພື່ອເປັນພາກສ່ວນໜຶ່ງຂອງໃນການສົ່ງເສີມການມີສ່ວນຮ່ວມແລະເຂົ້າເຖິງແຫ່ງຂໍ້ມູນ. ເບິ່ງລາຍລະອຽດໄດ້ທີ່:https://landportal.org/
- **International Institute for Environment and Development (IIED)** ສົ່ງເສີມດ້ານການພັດທະນາແບບຍືນຍົງ ເພື່ອປັບປຸງວິຖີຊີວິດ ແລະປົກປັກຮັກສາສິ່ງແວດລ້ອມ. IIED ມີການຜະລິດສື່ພິມທີ່ຫຼາກຫຼາຍກ່ຽວກັບປະເດັນທີ່ດິນ ແລະ ສິດທິການຄອບຄອງທີ່ດິນ. ທ່ານສາມາດເຂົ້າເບິ່ງໄດ້ທີ່: http://pubs.iied.org/
- **OpenLandContracts.org** ແມ່ນເວບໄຊ້ທີ່ລວບລວມ ບັນດາ ໜັງສືສັນຍາກ່ຽວກັບການໂຄງການລົງທຶນດ້ານທີ່ດິນ, ກະສິກໍາ ແລະ ປ່າໄມ້. ເວັບໄຊ້ນີ້ຍັງລວບລວມເອົາບັນດາບົດນິຕິກໍາແລະເຄື່ອງມືສໍາລັບການຄົ້ນຫາບັນດາໜັງສືສັນຍາຕ່າງໆ. ເບິ່ງລາຍລະອຽດໄດ້ທີ່: http://www.openlandcontracts.org/
- **The Research Consortium** ແມ່ນສູນກາງ ການລວບລວມ ແລະ ການແລກປ່ຽນຂໍ້ມູນກ່ຽວກັບສິດທິຂອງແມ່ຍິງຕໍ່ກັບທີ່ດິນ. ເບິ່ງລາຍລະອຽດໄດ້ທີ່: https://consortium.resourceequity.org/

## ກິດຈະກໍາໃນໄຕມາດໜ້າ (ເດືອນເມສາ – ມິຖຸນາ 2018)

- ກອງປະຊຸມ ຄູ່ຮ່ວມພັດທະນາ ກ່ຽວກັບຂໍ້ສະເໜີແນະກ່ຽກັບຕໍ່ກັບກົດໝາຍທີ່ດິນສະບັບປັບປຸງ ແລະ ສິດຄອບຄອບທີ່ດິນຕາມຮີດຄອງປະເພນີ ຂອງທີ່ດິນປ່າໄມ້, ເດືອນ ເມສາ 2018
- ງານຝຶກອົບຮົມ ກ່ຽວກັບການກຽມພ້ອມຂອງຊຸມຊົນ ໃນການເຮັດວຽກຮ່ວມກັບ ນັກລົງທຶນ ແລະ ການເຈລະຈາຕໍ່ລອງຂອງຊຸມຊົນ ກັບນັກລົງທຶນ, ເດືອນ ພຶດສະພາ 2018
- ງານແລກປ່ຽນສໍາມະນາພາກພື້ນແມ່ນໍ້າຂອງ ຂອງອົງການຈັດຕັ້ງທາງສັງຄົມ ກ່ຽວກັບ ການຄຸ້ມຄອງທີ່ດິນໃນລາວ, ພຶດສະພາ 2018
- ເຂົ້າຮ່ວມກອງປະຊຸມພາກພື້ນຂອງ MRLG, ເດືອນ ພຶດສະພາ 2018
- ກອງປະຊຸມ ສະມາຊິກຫຼັກ ຂອງ LIWG, ເດືອນ ມິຖຸນາ 2018
- ງານນໍາສະເໜີ ບົດຄົ້ນຄວ້າ ມິຕິທາງດ້ານການເມືອງ ຕໍ່ກັບ ວຽກງານການຈັດສັນທີ່ດິນ ແລະ ຄວາມເປັນຂອງ ການຄຸ້ມຄອງທີ່ດິນໃນລາວ ໂດຍ IWMI ແລະ ສູນສຶກສາ ອາຊຽນ ຈາກ ມະຫາວິທະຍາໄລ ກຽວໂຕ ປະເທດຍີ່ປຸ່ນ, ເດືອນ ມິຖຸນາ 2018
- ກອງປະຊຸມພັດທະນາປະຕິທິນກົດໝາຍປະຈໍາປີ 2019
- ງານເປີດໂຕສູນ LILC

**ຕິດຕໍ່ສອບຖາມຂໍ້ມູນເພີ່ມເຕີມໄດ້ທີ່:**

**ໂທ:** +85630 9815657 **ອີເມວ:** info@laolandinfo.org

**ເວັບໄຊ້:** www.laolandinfo.org **ເຟສບຸກ:** Land Information Working Group

ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG